# ບົດຮຽນໂຮງຮຽນວັນອາທິດ

## ວັນອາທິດ ທີ 06 ສິງຫາ 2006 - (06-08-2006)

---

## ຊຳຣະໃຫ້ບໍຣິສຸດໂດຍພຣະເຈົ້າ

**ຂໍ້ພຣະຄັມພີໃນບົດຮຽນ:** ( ໂຢຮັນ17:9-23 )

**ພຣະຄັມພີແຫ່ງຄວາມຈິງ:** ພຣະເຢຊູໄດ້ອະທິຖານເພື່ອຜູ້ທີ່ເຊື່ອທັງຫລາຍທີ່ໄດ້ຖືກຊຳຣະໃຫ້ບໍລິສຸດແລ້ວດ້ວຍຄວາມຈິງຂອງພຣະເຈົ້າ; ຜູ້ທີ່ເຊື່ອຈະຕ້ອງໄດ້ຮັບຜິດຊອບຢ່າງຈິງຈັງໃນການທີ່ຈະນຳຂ່າວປະເສີດເຣື່ອງວຽກງານຂອງພຣະຄຣິດອອກໄປສູ່ໂລກ.

**ຜົນສະທ້ອນຕໍ່ຊີວິດ:** ບົດຮຽນນີ້ໄດ້ແຕ່ງຂຶ້ນເພື່ອຊ່ອຍໃຫ້ຜູ້ທີ່ມີຄວາມເຊື່ອທີ່ໃຫຍ່ແລ້ວໃຫ້ເຮັດວຽກງານຂອງພຣະເຈົ້າເປັນສູນກາງເພື່ອຈະໄດ້ປ່ຽນແປງສະພາບປະເພນີຂອງເຂົາໂດຍ:

*ເພື່ອໃຫ້ເຂົ້າໃຈຄວາມຫມາຍທີ່ຈະມີສ່ວນປະກອບເຂົ້າກັນທີ່ພຣະເຈົ້າໄດ້ຊຳຣະຂ້າພະເຈົ້າໃຫ້ບໍຣິສຸດ; ແລະ

*ເພື່ອໃຊ້ຄວາມຮູ້ແລະການຍອມຮັບຄວາມຮັບຜິດຊອບໃນພາລະຂອງແຕ່ລະຄົນຜູ້ທີ່ໄດ້ຖືກຊຳຣະໃຫ້ບໍຣິສຸດແລ້ວ.

## ພຣະເຈົ້າຊຳຣະໃຫ້ຂ້າພະເຈົ້າບໍຣິສຸດໄດ້ແນວໃດ?

ເບັນເປັນຄຣິສຕຽນທີ່ມີຄວາມຕັ້ງໃຈທີ່ຈະເຮັດໃຫ້ບ່ອນທີ່ລາວເຮັດວຽກມີຄວາມແຕກຕ່າງເກີດຂຶ້ນ. ມີເພື່ອນຮ່ວມງານບາງຄົນມີປະຕິກິຣິຍາຕອບຮັບໃນການເປັນພະຍານຂອງລາວຄືເອີ້ນລາວວ່າ "ຜູ້ຖືເຄັ່ງຄັດທາງແບ໊ບຕິສ." ລາວກໍຍິນຍອມຮັບເອົາຄຳຢອກລໍ້ໃນທາງແງ່ດີເພາະລາວຮູ້ວ່າ, ຕາມພຣະຄັມພີໃຫມ່ບັນທຶກໄວ້, ຜູ້ທີ່ຕິດຕາມພຣະເຢຊູກໍຖືວ່າເປັນຜູ້ຖືເຄັ່ງຄັດເຫມືອນກັນແລະແມ່ນ " ຜູ້ທີ່ໄດ້ຖືກເລືອກໃຫ້ອອກໄປ " ແລະເປັນຜູ້ທີ່ເຊື່ອທຸກຄົນກໍ່ແມ່ນໄດ້ຖືກເລືອກໃຫ້ອອກໄປໂດຍພຣະຜູ້ເປັນເຈົ້າແທ້.

ທ່ານສາມາດບອກເຖິງສີຫນ້າຂອງເບັນທີ່ເຕັມໄປດ້ວຍຄວາມກະຕືລືລົ້ນນັ້ນໄດ້ບໍ່? ມີຄົນຫືວຂວັນທ່ານບໍ່ໃນການທີ່ທ່ານໃຫ້ຄຳຫມັ້ນສັນຍາກັບພຣະຄຣິດ?

ໃນຂນະທີ່ພວກເຮົາໄດ້ມີການສຳຣວດເບິ່ງການອະທິຖານທີ່ພິເສດຂອງພຣະເຢຊູຢູ່, ພວກເຮົາຈະການຈະເຣີນຂຶ້ນແລະມີຄວາມເຂົ້າໃຈຕື່ມໃນເຣື່ອງຄວາມຫມາຍໃນການຖືກສົ່ງອອກໄປໂດຍພຣະເຈົ້າ. ພຣະທັມຂອງພຣະອົງຈະສະແດງແຈ້ງໃນເຣື່ອງຄວາມຮັບຜິດຊອບເພື່ອທີ່ຈະຫນູນໃຈໃນທຸກສິ່ງທີ່ມີຄວາມສຳພັນຂອງຊີວິດ.

## ສຶກສາພຣະຄັມພີ

### 1. ຢູ່ໃນໂລກ: ( ໂຢຮັນ 17: 9-13 )

ອັຄສາວົກໂຢຮັນ, ແລະຮວມກັບຄົນອື່ນໆ ດ້ວຍ, ໄດ້ຍິນສຽງການອະທິຖານຂອງພຣະເຢຊູ, ມີການບັນທຶກໄວ້ໃນໂຢຮັນ 17. ພວກເຂົາຈະຕ້ອງໄດ້ຮັບຄວາມຮູ້ສຶກເຫມືອນກັນກັບໂມເຊທີ່ຢູ່ຕໍ່ຫນ້າພຸ່ມໄມ້ທີ່ເປັນກອງໄຟ, ອພຍ. 3: 5 ນັກຮຽນພຣະຄັມພີບາງຄົນໄດ້ສລູບເຖິງການອະທິຖານຄັ້ງນີ້ວ່າຍິ່ງໃຫຍ່ທີ່ສຸດທີ່ມີທັງຫມົດໃນພຣະຄັມພີ.

ພຣະເຢຊູໄດ້ສເວີຍອາຫານຄໍ່າຄັ້ງສຸດທ້າຍຢູ່ຫ້ອງຊັ້ນເທິງໃນກຸງເຢຊູຊາເລັມ. ຫລັງຈາກທີ່ພຣະອົງໄດ້ຊົງລ້າງຕີນໃຫ້ພວກເຂົາແລ້ວ, ພຣະອົງກໍໄດ້ໃຫ້ຄຳຕັກເຕືອນຊົ່ວລະຍະນຶ່ງທີ່ຍາວນານພໍສົມຄວນຕາມທີ່ໄດ້ບັນທຶກໄວ້ໃນໂຢຮັນ ( 13-16 ). ສັງເກດໄດ້ເຖິງຄຳສອນສຸດທ້າຍທີ່ເວົ້າວ່າ: " ທ່ານທັງຫລາຍຈະໄດ້ຮັບທຸກທໍຣະມານຢູ່ໃນໂລກນີ້. ຈົ່ງເປັນຜູ້ສລາດເພາະເຮົາໄດ້...... " ( 16: 33 ). ແລ້ວພຣະອົງກໍໄດ້ບອກຄຳອະທິຖານດັ່ງນີ້-ເພາະເປັນຄຳທີ່ຫມາຍເຖິງພຣະອົງຈະໄດ້ພົບໃນທີ່ສຸດ, ແຕ່ຈະເປັນໄຊຊະນະຄັ້ງຍິ່ງໃຫຍ່. ພຣະຄຳຂອງພຣະອົງຈະຊົງສະແດງໃຫ້ຜູ້ທີ່ເຊື່ອໃນພຣະອົງ

ມີຄວາມໝັ້ນໃຈໃນຄວາມສຳເຣັດໃນການດີທີ່ພຣະອົງໄດ້ຊົງເປັນຜູ້ເລີ້ມຕົ້ນໄວ້ແລ້ວ.

ໃຫ້ພວກເຮົາຂຽນຂໍ້ຄວາມສຳຄັນເປັນຂໍ້ອະທິຖານໃນ 3 ວັກ. ນຶ່ງ, ພຣະເຢຊູອະທິຖານເພື່ອພຣະອົງເອງ( ຂໍ້ 1-5 ) ; ຕໍ່ໄປພຣະອົງໄດ້ອະທິຖານເພື່ອພວກສາວົກ ( ຂໍ້ 6-19 ); ແລະສຸດທ້າຍ, ພຣະອົງໄດ້ອະທິຖານເພື່ອຜູ້ທີ່ເຊື່ອທັງໝົດ ( ຂໍ້ 20-26 ).

ຈົ່ງສັງເກດຄຳວ່າ ຖວາຍກຽດ ໃນວັກທີແລກ. ແລະສິ່ງນີ້ກໍມີ 5 ຄັ້ງໃນ 5 ຂໍ້ແລະພື້ນຖານຄວາມໝາຍກໍຄືການຊົງເປີດເຜີຍໃຫ້ເຫັນຄວາມຈິງຂອງທັມມະຊາດຂອງບາງສິ່ງບາງຢ່າງແລະຄົນບາງຄົນ. ສິ່ງທີ່ພຣະເຢຊູຂໍຈາກພຣະບິດາທຳອິດຄື: " ຂໍຊົງໂຜດໃຫ້ພຣະບຸດຂອງພຣະອົງໄດ້ຮັບກຽດ " ( ຂໍ້ 1 ) ພຣະອົງຊົງຮ້ອງຂໍຕໍ່ພຣະບິດາໃຫ້ເປີດເຜີຍເຖິງຄວາມຈິງວ່າຜູ້ໃດເປັນພຣະບຸດຂອງພຣະເຈົ້າແທ້. ແນຈຸດໝາຍໃສ່ຄຳທີ່ຢູ່ໃນຂໍ້ 9-13. ແລະນີ້ຄືສິ່ງທີ່ພວກເຮົາໄດ້ພົບໃນຄຳຖາມທີ່ສອງໃນຄຳອະທິຖານຂອງພຣະເຢຊູ: ພຣະອົງຊົງເລີ້ມຕົ້ນດັ່ງນີ້, " **ຂ້າພຣະອົງອະທິຖານເພື່ອພວກເຂົາ** " ພຣະອົງຊົງຖືກເຈີມໃຫ້ຄົບບໍຣິບູນແລ້ວດ້ວຍເໝືອນກັນກັບພຣະເຈົ້າໄດ້ເຈີມທັມມາຈານຜູ້ສູງສຸດ, ຄືເຮັດໃຫ້ສາວົກຂອງພຣະອົງມີສ່ວນຮ່ວມ. ພຣະອົງຍັງໄດ້ເວົ້າອີກວ່າ " **ຂ້າພຣະອົງບໍ່ໄດ້ອະທິຖານເພື່ອໂລກນີ້.** " ພຣະເຢຊູມີຄວາມເປັນຫ່ວງເປັນໃຍເປັນການສ່ວນຕົວກັບພວກສາວົກທີ່ພຣະອົງຈະປະຖິ້ມພວກເຂົາໄວ້ຢູ່ໃນໂລກນີ້. ພຣະເຢຊູໄດ້ອະທິບາຍເຖິງຜູ້ທີ່ຕິດຕາມພຣະອົງດັ່ງນີ້ " **ຜູ້ທີ່ພຣະອົງໄດ້ຊົງປະທານໃຫ້ຂ້າພຣະອົງນັ້ນ** " ພຣະອົງໄດ້ມີຄວາມເຂົ້າໃຈໃນສາວົກແລະຂອງພຣະຣາຊທານຈາກພຣະບິດາໃຫ້ແກ່ພຣະອົງແລ້ວ. ເປັນຫຍັງພວກເຂົາຈຶ່ງຖືກເລືອກທີ່ຈະມອບໃຫ້ພຣະເຢຊູ? ຈົ່ງສັງເກດຂໍ້ຄວາມສຳຄັນນີ້ " ຂ້າພະອົງມີກຽດໃນສິ່ງເຫລົ່ານັ້ນ " ທ່ານອາດຈະແປຄຳວ່າ ທີ່ໄດ້ຮັບກຽດກໍຄືການຊົງສະແດງໃຫ້ຮູ້ເຖິງຄວາມຈິງຕາມທັມມະຊາດຂອງຄົນບາງຄົນ. ສາວົກຊຸດທີແລກຄື 11 ຄົນນີ້ໄດ້ຢູ່ກັບພຣະເຢຊູເປັນເວລາລະຍະຍາວສົມຄວນທີ່ຈະໄດ້ຮັບການຊົງປ່ຽນແປງຈາກພຣະອົງ; ພວກເຂົາໄດ້ສະແດງອອກມາໃຫ້ເຫັນເຖິງການກະທຳ, ທ່າທາງແລະກິຣິຍາບົດຕ່າງໆ ທີ່ຄ້າຍຄືພຣະອົງ. ແລະດຽວນີ້ພຣະເຢຊູຈະໄດ້ຈາກພວກເຂົາໄປ, ພຣະອົງໄດ້ເວົ້າກັບພຣະບິດາ, " ຂ້າພະອົງຈະບໍ່ຢູ່ໃນໂລກນີ້ດົນ....ຂ້າພະອົງກຳລັງຈະໄປຫາພຣະອົງ " ແລ້ວຜູ້ໃດຈະດຳເນີນກິຈການຂອງພຣະເຢຊູທີ່ພຣະອົງໄດ້ເລີ້ມກໍ່ໄວ້ແລ້ວ.

ແມ່ນຄວາມຮັບຜິດຊອບທີ່ໜ້າອັສຈັນທີ່ໄດ້ມອບໄວ້ໃຫ້ຈົນເຕັມມືແລ້ວໃນຄົນພິເສດຜູ້ນຶ່ງ! ໂດຍບໍ່ຕ້ອງສົງສັຍເລີຍວ່າພຣະເຢຊູໄດ້ອະທິຖານເພື່ອພວກເຂົາດັ່ງນີ້ " ພຣະບິດາຜູ້ບໍຣິສຸດ, ໂຜດຄຸ້ມຄອງພວກເຂົາໂດຍພຣະນາມຂອງພຣະອົງດ້ວຍ. " ພຣະເຢຊູຊົງຮູ້ດີວ່າສັດຕູຂອງພຣະອົງກຳລັງຈະບຸກໂຈມຕີພວກສາວົກ. ເໜືອສິ່ງອື່ນໃດທັງໝົດ, ພວກເຂົາຕ້ອງການຄວາມຄຸ້ມຄອງຊຶ່ງມີພຽງພຣະບິດາອົງດຽວເທົ່ານັ້ນທີ່ຈະສາມາດປະທານໃຫ້ໄດ້.

ແນ່ນອນທັງ 11 ຄົນນີ້ຄືຜູ້ທີ່ມີຄວາມອວດອ້າງໃນຄວາມເປັນຣາຊວົງຂອງພຣະເຢຊູ-ເຖິງແມ້ຄວາມຕາຍ-ແຕ່ກໍຍອມລະຖິ້ມຄຳສັນຍາຂອງພວກເຂົາ( ມລກ. 14: 31-50 ). ເຖິງຢ່າງໃດກໍຕາມ, ການປະຕິເສດຂອງເຂົາກໍເປັນພຽງຊົ່ວຄາວເທົ່ານັ້ນ. ເພາະວ່າພຣະເຢຊູໄດ້ຊົງອະທິຖານເພື່ອພວກເຂົາແລ້ວ, ແລະພວກເຂົາທັງໝົດກໍໄດ້ຮັບການໃຫ້ອະພັຍຄືນດີໃໝ່, ແລະກັບມີຄວາມເຂັ້ມແຂງຂຶ້ນ, ມີຄວາມເຊື່ອທີ່ໝັ້ນຄົງໃນການເປັນພະຍານເພື່ອພຣະເຢຊູຄືເປັນດັ່ງທີ່ພຣະເຢຊູຕ້ອງການໃຫ້ພວກເຂົາເປັນ. ໃຫ້ຄິດເຖິງສິ່ງແຕກຕ່າງທີ່ໄດ້ເກີດຂຶ້ນແບບນີ້ກໍເພາະພຣະເຢຊູໄດ້ຊົງອະທິຖານເພື່ອພວກເຂົາ! ເໝືອນກັນກັບໃນເວລາທີ່ພຣະອົງເຄີຍຢູ່ນຳຄືໄດ້ຊົງ**ປົກປ້ອງແລະເຝົ້າຍາມ**ພວກເຂົາຢູ່. ພາກສ່ວນຂອງພຣະອົງຄືເປັນເກາະກຳບັງ ແລະຜູ້ປ້ອງກັນນີ້ຈະດຳເນີນຕໍ່ໄປໂດຍໃນຄຳອະທິຖານທີ່ສຳຄັນທີ່ສຸດຂອງພຣະອົງ. ພຣະເຢຊູໄດ້ຊົງສະແດງໃຫ້ເຫັນພຣະອົງຈະຊົງຮັບເອົາສາວົກຜູ້ນຶ່ງໃຫ້ເຂົ້າໃນສ່ວນຮ່ວມເປັນຄອບຄົວວົງກະສັດກໍຄື-ຢູດາ, ບໍ່ແມ່ນຜູ້ທີ່ເຊື່ອແລ້ວແຕ່ຫລຸດຫາຍໄປຈາກຄວາມເຊື່ອ, ແຕ່ເປັນຜູ້ທີ່ຫລອກລວງແລະເລືອກຕົວເອງໃຫ້ມານມີອຳນາດຄວບຄຸມຢູ່ເໜືອຕົວເອງ. ການສະແດງອອກຂອງຢູດາໃນການທັກຫລັງພຣະເຢຊູແມ່ນເປັນໄປເພື່ອໃຫ້ພຣະທັມສຳເຣັດສົມບູນແບບ. ແລະຕໍ່ມາ, ເປໂຕໄດ້ບັນລະຍາຍເຖິງການຕາຍຂອງຢູດາທີ່ຈະພົບຢູ່ໃນພຣະທັມ ກຈກ.1: 15-22, ແລະຢູ່ໃນວົງເລັບທີ່ໝາຍໄວ້ໃນພຣະທັມ ເພັງສັຣເສີນ.69:25 ແລະ 109:8.

ໃນຂໍ້ 13 ໄດ້ບັລຍາຍເຖິງຄວາມຮູ້ສຶກຂອງພຣະເຢຊູທີ່ວ່າ, ເຖິງແມ່ນວ່າແນ່ນອນໃນໄວໆ ນີ້ພຣະອົງກໍຈະໄດ້ຮັບການພັດພາກໂດຍພຣະບິດາແລະພວກສາວົກກໍຈະມີວັນນັ້ນເຊັ່ນດຽວກັນ, ຊຶ່ງການຈາກກັນຄັ້ງນີ້ເປັນພຽງຊົ່ວຄາວເທົ່າ

ນັ້ນ. ພຣະອົງກຳລັງຈະກັບໄປບ້ານຂອງພຣະອົງ- " ຂ້າພະອົງກຳລັງຈະໄປຫາພຣະອົງ. " ພາຣະກິດທີ່ພຣະອົງເຮັດຢູ່ໃນໂລກນີ້ຈວນຈະສຳເຣັດແລ້ວ. ພຣະອົງໄດ້ເວົ້າຄຳອະທິຖານນີ້ເພື່ອແທນພວກສາວົກຄື " ເພື່ອໃຫ້ເຂົາໄດ້ຮັບຄວາມຊື່ນຊົມຍິນດີຂອງຂ້າພຣະອົງຢ່າງເຕັມປ່ຽມ " ຈົ່ງຄິດເຖິງ-ຄວາມຊື່ນຊົມຍິນດີທີ່ສາວົກທີ່ພຣະ ເຢຊູຄຣິດໄດ້ເຮັດພາຣະກິດທີ່ພຣະອົງນຳມາເພື່ອໂລກນີ້ໄດ້ສຳເຣັດແລ້ວ-ແລະນັ້ນແຫລະຄືສິ່ງທີ່ພຣະອົງຢາກຈະແບ່ງປັນໃຫ້ພວກສາວົກເພື່ອຈະໄດ້ມີສ່ວນໃນຖານະຜູ້ທີ່ຕິດຕາມພຣະອົງດ້ວຍ. ເຮັດແນວໃດພວກສາວົກ, ກໍຄືຜູ້ທີ່ຕິດຕາມພຣະອົງໃນທຸກວັນນີ້, ຈະໄດ້ມີສ່ວນຮ່ວມຊື່ນຊົມຍິນດີໃນຄວາມສຳເຣັດນີ້ໄດ້? ດ້ວຍຄວາມເຊື່ອໝັ້ນແລະເປັນຕົວແທນໃຫ້ແລ້ວໂດຍພຣະເຢຊູ-ຊີວິດຂອງພຣະອົງແລະໄດ້ໃຫ້ພາຣະກິດຂອງພຣະອົງຄືການຊົງໄຖ່ໄວ້ແລ້ວ. ເມື່ອໃດພວກເຮົາຫາກເຮັດ ດັ່ງນີ້, ຄວາມຊື່ນຊົມຍິນດີທີ່ພຣະອົງມີກໍຈະກາຍມາເປັນຄວາມຊື່ນຊົມຍິນດີຂອງພວກເຮົາ.

## ໒. <u>ແຕກຕ່າງຈາກໂລກ:</u> ( ໂຢຮັນ 17: 14-19 )

ມີ 3 ກຸນແຈທີ່ຕີຄວາມໝາຍໃນການແບ່ງຄຳອະທິຖານຂອງພຣະເຢຊູຄື-ສາມຄຳທີ່ໄດ້ສະແດງອອກຢູ່ໃນຂໍ້ພຣະທັມທີ່ພວກເຮົາຄວນຈະຮຽນຮູ້ທີ່ຈະເຂົ້າໃຈຄື. <u>ພາກທີນຶ່ງຄຳວ່າ**ໂລກ**,</u> ໄດ້ໝາຍເຖິງໂລກຂອງພຣະບິດາທີ່ເປັນຄວາມຈິງທີ່ພຣະເຢຊູມີຄວາມເຊື່ອໝັ້ນເຖິງເຣື່ອງນີ້ຈຶ່ງໄດ້ບອກຕໍ່ໃຫ້ພວກສາວົກ. <u>ພາກທີສອງຄວາມໝາຍຄຳວ່າໂລກ,</u> ທີ່ໄດ້ເວົ້າເຖິງ 18 ເທື່ອໃນຂໍ້ທີ 17, ແລະມີອີກ 8 ຄຳທີ່ມີຄວາມໝາຍດຽວກັນໃນຂໍ້ 14-19.ພຣະເຢຊູໄດ້ໃຊ້ຄຳນີ້ເພື່ອອະທິບາຍເຖິງຊີວິດການເປັນຢູ່ຂອງຄົນທີ່ບໍ່ທັນໄດ້ຮັບຄວາມລອດພົ້ນເທື່ອແລະພວກທີ່ບໍ່ຮູ້ພຣະເຈົ້າແລະມີປະເພນີທີ່ຕໍ່ສູ້ກັບພຣະອົງ. ໃນການອະທິຖານເພື່ອພວກສາວົກໃນຄັ້ງນີ້, **ແລະໂລກຈະກຽດຊັງ**ເຂົາ ເພາະສາວົກທັງໝົດບໍ່ແມ່ນຂອງໂລກ, ຫລືບໍ່ມີການເຫັນດີກັບໂລກ. ແລະຍັງຢູ່, ຄືພຣະອົງບໍ່ໄດ້ຂໍໃຫ້ພຣະບິດານຳພວກເຂົາໃຫ້ອອກຈາກໂລກນີ້, ແຕ່ແທນດ້ວຍ " **ຂໍພຣະອົງປ້ອງເຂົາໄວ້ໃຫ້ພົ້ນຈາກມານຮ້າຍ** " ( ຊາຕານ )ຄືມັນເປັນຜູ້ປົກຄອງຢູ່ເໜືອລະບົບໃນ ໂລກຂອງຜູ້ທີ່ບໍ່ມີພຣະເຈົ້າ. <u>ກຸນແຈພາກທີສາມຄື</u>ຄວາມບໍຣິສຸດ. ພື້ນຖານຄວາມເຂົ້າໃຈໃນພາກນີ້ກໍຄືຄົນຜູ້ນຶ່ງໄດ້ຖືກເລືອກຫລືສິ່ງຂອງອັນໃດນຶ່ງໃຫ້ອອກໄປເພື່ອການຮັບໃຊ້ພິເສດ. ຜູ້ທີ່ເປັນຄຣິສຕຽນທັງໝົດແມ່ນໄດ້ຖືກເລືອກໃຫ້ບໍຣິສຸດເພື່ອຈະໄດ້ນະມັສການແລະຮັບໃຊ້ພຣະເຈົ້າ. ເມື່ອໂປໂລຂຽນຈົດໝາຍນີ້ເຖິງຜູ້ທີ່ເຊື່ອໂດຍເອີ້ນວ່າ " **ບໍຣິສຸດ** " ຊຶ່ງຮາກຂອງຄຳນີ້ກໍແມ່ນມາຈາກຄຳດຽວກັນກັບຜູ້ທີ່ຖືກເລືອກ.

ຄຳອະທິຖານສິ່ງທີ ທີ່ພຣະເຢຊູໄດ້ຂໍເພື່ອພວກສາວົກຕໍ່ພຣະບິດາກໍຄື " **ຂໍໄດ້ໂປດຊຳຣະເຂົາໃຫ້ບໍຣິສຸດດ້ວຍຄວາມຈິງ.** " ດ້ວຍຄວາມເຊື່ອພວກເຮົາກໍຈະໄດ້ຮັບຄວາມຈິງທີ່ໄດ້ມາໂດຍພຣະຄັມທີ່ມີໃນພຣະຄັມພີ, ພວກເຮົາຈະບໍຣິສຸດດ້ວຍຄວາມຈິງນັ້ນ-ແລະຈະສົ່ງອອກໄປຈາກພວກຄົນຝ່າຍໂລກທີ່ບໍ່ເຊື່ອ, ແລະອາດຈະເຮັດຈຸດປະສົງຂອງພຣະເຈົ້າເກີດຜົນສຳເຣັດເພື່ອພວກເຮົາ. ຄວາມຈິງຂອງພຣະອົງຈະເຮັດໃຫ້ພວກເຮົາມີຄວາມແຕກຕ່າງເມື່ອເບິ່ງຊີວິດການເປັນຢູ່ໂລກນີ້; ພວກເຮົາຈະເຫັນໃນສິ່ງທີ່ພຣະເຈົ້າຄາດຫວັງໄວ້. ແລະພວກເຮົາກໍຈະປ່ຽນສະພາບ-ແລະຖືກແຍກອອກໃຫ້ຢູ່ຕ່າງຫາກເພື່ອພຣະອົງ.

ພຣະເຢຊູໄດ້ຊົງບອກແຈ້ງຄືພຣະອົງ " ຈະສົ່ງພວກເຂົາໄປຢູ່ໃນໂລກ " ໃນຂະນະທີ່ພຣະອົງຍັງມີຊີວິດຢູ່, ແຕ່ເຂົາຈະຕ້ອງຕັ້ງໝັ້ນຄົງຢູ່ເພື່ອເປັນພະຍານຝ່າຍພຣະອົງ. ນີ້ເປັນຄຳສັ່ງແທ້ຈະແຈ້ງແລ້ວໃນການທົດສອບການອອກປະຕິບັດງານຄືໃນຊີວິດການເປັນຢູ່ແຕ່ລະວັນ. ພຣະເຢຊູໄດ້ສົ່ງພວກເຮົາໄປສູ່ໂລກ.

## 3. <u>ຮ່ວມກັນໃນການແບ່ງປັນຕາມຈຸດປະສົງ:</u> ( ໂຢຮັນ 17:20-23 )

ໃນຕອນສຸດທ້າຍຂອງການອະທິຖານຂອງພຣະອົງ, ພຣະເຢຊູໄດ້ອະທິຖານເພື່ອທຸກຄົນທີ່ເຊື່ອ. ພຣະອົງໄດ້ມີສ່ວນຮ່ວມຄືໄດ້ສົ່ງພວກສາວົກເພື່ອໃຫ້ເປັນພະຍານເພື່ອພຣະອົງແລະເຂົາຈະເຮັດໃຫ້ຜູ້ເຊື່ອໃໝ່ເກີດເພີ້ມທະວີຂຶ້ນ: " **ເພື່ອຄົນທັງປວງທີ່ວາງໃຈໃນຂ້າພຣະອົງເພາະຖ້ອຍຄຳຂອງເຂົາ.** " ເຊັ່ນກອງປະກາດທີ່ໄດ້ປະຕິບັດຕາມຄຳສັ່ງແລະນຳມາໃຊ້ໃນທຸກຍຸກສມັຍຂອງຄຣິສຕຽນ -ກໍຄືຜູ້ທີ່ຮູ້ຈັກພຣະອົງແລ້ວຈະຕ້ອງໄດ້ບອກໃຫ້ແກ່ຄົນທີ່ຍັງບໍ່ຮູ້ພຣະອົງເທື່ອໃຫ້ຮູ້ຈັກພຣະເຢຊູໄດ້ຂໍພິເສດເພື່ອຜູ້ທີ່ເຊື່ອທັງໝົດຄື: " ເພື່ອເຂົາທັງຫລາຍຈະໄດ້ເປັນອັນນຶ່ງອັນດຽວກັນ, ດັ່ງທີ່ພຣະອົງ,

ຄືພຣະບິດາ, ຊົງສະຖິດໃນຂ້າພຣະອົງແລະຂ້າພຣະອົງໃນພຣະອົງ." ແລະນີ້ຄືຄໍາອະທິຖານພາກທີສີ່ໃນບົດນີ້, ພຣະອົງໄດ້ຊົງຂໍໃຫ້ພຣະບິດາອະນຸຍາດໃຫ້ພວກສາວົກໄດ້ເປັນອັນນຶ່ງອັນດຽວດ້ວຍກັນກັບພຣະບິດາ ແລະພຣະບຸດແລະນີ້ຄື " ເພື່ອເຂົາຈະໄດ້ເປັນອັນນຶ່ງອັນດຽວເຫມືອນດັ່ງທີ່ເຮົາເປັນ."

ເຮັດແນວໃດຄົນທີ່ຢູ່ໃນໂບດຂອງທ່ານທີ່ມີຄວາມແຕກຕ່າງກັນແລະບໍ່ເຄີຍເປັນອັນດຽວກັນມາກ່ອນ? ພຣະເຢຊູໄດ້ໃຫ້ຄໍາຕອບໃນຄໍາອະທິຖານຄື-ການເປັນອັນນຶ່ງອັນດຽວກັນຫມາຍເຖິງມີຊີວິດພຣະວິນຍານອັນດຽວກັນ. ຊີວິດນັ້ນປະກອບດ້ວຍພຣະບິດາແລະພຣະບຸດ. ຜູ້ທີ່ເຊື່ອທັງຫມົດແມ່ນໄດ້ມີປະສົບການໃນການເກີດແບບດຽວກັນທີ່ເຮັດໃຫ້ພວກເຮົາມີຊີວິດໃຫມ່ທີ່ໄດ້ກາຍເປັນຄອບຄົວດຽວກັນ. ຄໍາຕອບນີ້ໃນຄໍາອະທິຖານຂອງພຣະເຢຊູ; " **ເພື່ອເຂົາຈະໄດ້ເປັນອັນນຶ່ງອັນດຽວກັນຢ່າງສົມບູນ.**"

ໃນຂໍ້ 22 ໄດ້ບອກເຖິງຄວາມຈິງທີ່ຫນ້າອັສຈັນ:" **ກຽດຕິຍົດທີ່ພຣະອົງຊົງປະທານໃຫ້ຂ້ານ້ອຍນັ້ນຂ້ານ້ອຍກໍໄດ້ໃຫ້ແກ່ເຂົາ.**" ໂດຍພຣະອົງເອງເພື່ອພວກເຮົາ, ພຣະເຢຊູໄດ້ເວົ້າຄືນອີກໃນຂໍ້ ( 21,23 ). ພຣະອົງຊົງຮູ້ວ່າພວກທີ່ບໍ່ເຊື່ອກໍາລັງຊອມເບິ່ງຈະໄດ້ຮູ້ວ່າແມ່ນພຣະເຈົ້າໄດ້ຊົງໃຊ້ພຣະອົງມາແລະຈະໄດ້ຮູ້ຈັກພຣະນາມຂອງພຣະບິດາ ແລະຮູ້ເຖິງຄວາມຮັກທີ່ຊົງຮັກພຣະອົງແລະພຣະອົງກໍຢູ່ໃນເຂົາ, ພຣະເຢຊູຊົງກ່າວວ່າ " **ເພື່ອໂລກຈະໄດ້ຮູ້ວ່າແມ່ນພຣະອົງນັ້ນແຫລະ, ຊົງໃຊ້ຂ້ານ້ອຍມາແລະພຣະອົງຊົງຮັກເຂົາເຫມືອນດັ່ງທີ່ພຣະອົງຊົງຮັກຂ້ານ້ອຍ.**" ການທີ່ຈະເປັນອັນນຶ່ງອັນດຽວກັນແມ່ນຕ້ອງມີຄວາມຮັກ, ແລະຄວາມຮັກນີ້ຢູ່ເຫນືອຄວາມແຕກຕ່າງທຸກຢ່າງ, ແລະກໍໄດ້ຊົງໃຫ້ມະນຸດໄດ້ຝຶກແອບໃຫ້ລຶ້ງເຄີຍກັບຄວາມຮັກນີ້ ແລະກໍເປັນຄວາມຈິງບໍ່ມີຄວາມຂັດແຍ້ງຄືພວກເຮົາທີ່ມີຄວາມເຊື່ອທີ່ເຂັ້ມແຂງແລ້ວ. ຄຣິສຕຽນບໍ່ພຽງແຕ່ຕ້ອງແຍກອອກຢູ່ຕ່າງຫາກ; ຍັງຕ້ອງປະຕິເສດທີ່ຈະຕາມແບບຂອງຄົນຝ່າຍໂລກນີ້, ຜູ້ທີ່ເຊື່ອຍັງຈະຕ້ອງເຮັດວຽກຮ່ວມກັນແລະຕັ້ງໃຈທີ່ຈະໃຊ້ຄວາມຮັກທີ່ມີຣິດອໍານາດຈາກພຣະເຈົ້າໃນການທີ່ຈະປ່ຽນແປງແຕ່ລະບຸກຄົນແລະໄປສູ່ສັງຄົມແລະໃຫຍ່ກວ້າງອອກ.

ພາກທີຫ້າແລະເປັນສິ່ງສຸດທ້າຍທີ່ຄໍາອະທິຖານຂອງພຣະເຢຊູຄືໃນຂໍ້ 24 ທີ່ພຣະອົງໄດ້ທູນຂໍເພື່ອທີ່ຈະໃຫ້ສາວົກໄດ້ເຫັນສງ່າຣາສີຂອງພຣະອົງແລະຢູ່ກັບພຣະອົງຕລອດໄປເປັນນິດ. ຈະເປັນສິ່ງທີ່ຫນ້າຊື່ນຊົມຍິນດີຫລາຍປານໃດເມື່ອເຮົາຫາກຮູ້ວ່າໃນວັນນຶ່ງພວກເຮົາກໍຈະໄດ້ໄປຢູ່ດ້ວຍກັນກັບພຣະອົງ.

ອຸປຖັມໂດຍ ລາວຊາວເທີນແບັບຕິສສັມພັນ ( ແປແລະຮຽບຮຽງ A.P ) www.lsbf.org